# ຄວາມຈິງກ່ຽວກັບອາຫານຈຳເປັນ

Take a Fresh Look

**Basic Food**

### ຂ້ອຍສາມາດມີວຽກເຮັດ ແລະ ຍັງໄດ້ຮັບອາຫານຈຳເປັນຢູ່ບໍ່?

ແມ່ນແລ້ວ. ຄອບຄົວຂອງທ່ານສາມາດມີຣາຍໄດ້ສູງເຖິງ 200% ຂອງເສັ້ນຊີ້ນຳຄວາມທຸກຍາກຂອງຣັດຖະບານກາງ ແລະ ມີເງື່ອນໄຂໄດ້ຮັບອາຫານຈຳເປັນ.

| ຈຳນວນຄົນຢູ່ໃນຄອບຄົວ | ຂອບເຂດຣາຍໄດ້ປະຈຳເດືອນ* |
|---|---|
| 1 | $2,127 |
| 2 | $2,873 |
| 3 | $3,620 |
| 4 | $4,367 |
| 5 | $5,113 |

*ຈຳນວນເງິນທີ່ຖືກກັດແປງໃໝ່ໃນທຸກໆເດືອນອົກໂຕເບີ

### ຂ້ອຍຕ້ອງມີເດັກນ້ອຍເພື່ອຈະມີເງື່ອນໄຂໄດ້ຮັບບໍ່?

ບໍ່. ຄອບຄົວທຸກໆຂະນາດອາດຈະມີເງື່ອນໄຂທີ່ຈະໄດ້ຮັບອາຫານຈຳເປັນ.

### ຄົນອື່ນຜູ້ທີ່ຕ້ອງການອາຫານຈຳເປັນຫລາຍກວ່າຂ້ອຍເດ?

ມັນບໍ່ມີຂອບເຂດໃນຈຳນວນຄົນຜູ້ທີ່ມີເງື່ອນໄຂໄດ້ຮັບຜູ້ທີ່ສາມາດໄດ້ຮັບອາຫານຈຳເປັນ. ການຮັບເອົາອາຫານຈຳເປັນສຳລັບທ່ານ ແລະ ຄອບຄົວຂອງທ່ານຈະບໍ່ສະທ້ອນເຖິງຄວາມສາມາດຂອງຄົນອື່ນຄົນໃດຄົນນຶ່ງອີກທີ່ຈະໄດ້ຮັບການຊ່ວຍເຫລືອເຫລົ່ານີ້.

### ຂ້ອຍຕ້ອງເປັນ ປະຊາຊົນຄົນ **U.S.** ບໍ່?

ບໍ່. ເຖິງຢ່າງໃດກໍຕາມ, ໂຄງການຊ່ວຍເຫລືອເຄື່ອງບໍຣິໂພກເພີ້ມເຕີມຂອງຣັດຖະບານກາງ (SNAP) ແມ່ນຈຳກັດໃຫ້ແກ່ປະຊາຊົນຄົນ U.S. ແລະ ຄົນເຂົ້າມາຕັ້ງຖິ່ນຖານຜູ້ທີ່ສອດຄ່ອງນຳກົດຣະບຽບຂອງໂຄງການອັນເຈາະຈົງ.

ການຮັບເອົາການຊ່ວຍເຫລືອອາຫານທີ່ຈຳເປັນຈະບໍ່ສະທ້ອນເຖິງສະພາບການເຂົ້າເມືອງຂອງຄົນໃດຄົນນຶ່ງນຳພະແນກສັນຊາດ ແລະ ການເຂົ້າເມືອງຂອງ U.S.

ຄົນເຂົ້າມາຕັ້ງຖິ່ນຖານທີ່ບໍ່ມີເອກສານ ແລະ ປະຊາຊົນຜູ້ທີ່ບໍ່ແມ່ນຄົນສັນຊາດຜູ້ທີ່ເປັນຄົນທ່ອງທ່ຽວ ຫລືຄົນຜູ້ທີ່ບໍ່ແມ່ນເຂົ້າມາຕັ້ງຖິ່ນຖານຄົນອື່ນໆບໍ່ສາມາດໄດ້ຮັບການຊ່ວຍເຫລືອອາຫານທີ່ຈຳເປັນ.

### ຂ້ອຍສາມາດເປັນເຈົ້າຂອງເຮືອນຂອງຂ້ອຍ ແລະ ຣົດຄັນນຶ່ງ ແລະ ຍັງມີເງື່ອນໄຂໄດ້ຮັບບໍ່?

ແມ່ນ. ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບອີງໃສ່ຣາຍໄດ້, ຊັບສິນບັດແນວອື່ນທຸກໆຢ່າງເຊັ່ນວ່າຣົດຍົນ, ບັນຊີເງິນເບັ້ຽບຳນານ, ເຮືອນຂອງທ່ານ ແລະ ຊັບສິນອື່ນໆຈະບໍ່ຖືກພິຈາຣະນາໃສ່.

### ຂ້ອຍຕ້ອງໄດ້ໄປຫ້ອງການເພື່ອຈະຮ້ອງຂໍເອົາບໍ່?

ບໍ່.ທ່ານສາມາດຮ້ອງຂໍເອົາໄດ້ທາງອອນລາຍນ໌ໄດ້ທີ່ **www.washingtonconnection.org,** ໂດຍທາງທາງໂທຣະສັບ,ໂດຍບໍ່ຕ້ອງໄດ້ຍື່ນໃບຳຮ້ອງຂໍ,ໄດ້ທີ່ 1-877-501-2233 ຫລືໂດຍການສົ່ງໃບຳຮ້ອງຂໍໄປຫາ: DSHS-CSD Customer Service Center, PO Box 11699, Tacoma WA, 98411-6699.

### ເອກະສານຊະນິດໃດແດ່ທີ່ຂ້ອຍຈະຕ້ອງໄດ້ຫາມາໃຫ້?

ທ່ານຕ້ອງໄດ້ສະເໜີໃຫ້ພວກເຮົາດ້ວຍເລກໂຊໂຊຂອງທ່ານ, ຫລັກຖານຂອງບັດປະຈຳຕົວຂອງທ່ານ, ແລະ ຫລັກຖານຂອງລາຍໄດ້ ແລະ ລາຍຈ່າຍຄ່າທີ່ຢູ່ອາສັຍສຳລັບຄອບຄົວທີ່ທ່ານຂໍເອົາໃຫ້. ຖ້າຕ້ອງການ, ພວກເຮົາ ສາມາດຊ່ວຍທ່ານເອົາເອກະສານທີ່ຕ້ອງມີໄດ້.

### ບາງຄົນຈະໄດ້ຮັບພຽງແຕ່ **$16** ຕໍ່ເດືອນເທົ່ານັ້ນ – ມັນຈະຄຸ້ມຄ່າບໍ່ທີ່ຈະຂໍເອົາ?

ບາງຄົນຈະໄດ້ຮັບການຊ່ວຍເຫລືອປະຈຳເດືອນຕ່ຳສຸດສຳລັບຄອບຄົວນຶ່ງ ຫລື ສອງຄົນ,ຊຶ່ງຈະແມ່ນ $16 ບຸກຄົນ ຜູ້ທີ່ໄດ້ຮັບຈຳນວນຕ່ຳສຸດສ່ວນຫລາຍແລ້ວຈະເກັບທ້ອນໄວ້ຫລາຍເດືອນເພື່ອຈະຄຸ້ມຄ່າເດີນທາງໄປຮ້ານຂາຍອາຫານການກິນ. ຄົນອື່ນຈະໃຊ້ການຊ່ວຍເຫລືອເພື່ອຈະຕື່ມຫມາກໄມ້ ແລະ ຜັກສົດໃສ່ໃນງົບປະມານອາຫານຂອງເຂົາເຈົ້າ.

ຄົນສ່ວນຫລາຍໄດ້ຮັບການຊ່ວຍເຫລືອປະຈຳເດືອນທີ່ສູງກວ່າ.

ເພື່ອການຄິດຄຳນວນເບິ່ງໃນການຊ່ວຍເຫລືອປະຈຳເດືອນທີ່ທ່ານສາມາດໄດ້ຮັບ, ຈົ່ງໂທຣະສັບໄປຫາສາຍໂທຣະສັບອາຫານຈຳເປັນໂທຟຣີທີ່ເລກ **1-877-501-2233** ຫລື ແວ່ເຂົ້າເບິ່ງແວບໄຊທ໌ ຂອງພວກເຮົາໄດ້ທີ່ **www.washingtonconnection.org**.

### ມີການຊ່ວຍເຫລືອເພີ້ມເຕີມແນວໃດອີກບໍ່ສຳລັບການໄດ້ຮັບອາຫານຈຳເປັນ?

ເມື່ອເວລາທ່ານໄດ້ຮັບອາຫານຈຳເປັນ,ທ່ານຈະມີສິດໄດ້ຮັບໂຄງການອື່ນ,ເຊັ່ນວ່າ:

- ໂຄງການຄາບອາຫານຢູ່ໂຮງຮຽນຟຣີຫລືລຸດຣາຄ.
- ໂຄງການຊ່ວຍເຫລືອເຄື່ອງບໍຣິໂພກພິເສດສຳລັບແມ່, ເດັກທາຣົກ ແລະ ເດັກນ້ອຍ (WIC).

### ຂ້ອຍສາມາດໄດ້ຮັບຄວາມຊ່ວຍເຫລືອນຳການຝຶກຝົນ ຫລື ການຊອກວຽກບໍ່?

- ແມ່ນແລ້ວ, ຖ້າຫາກວ່າທ່ານໄດ້ຮັບອາຫານຈຳເປັນ, ທ່ານສາມາດອາສາສະມັກສຳລັບໂຄງການວຽກງານ ແລະ ການຝຶກຝົນ (BFET) ຂອງອາຫານຈຳເປັນ.
- BFET ເອົາການຊອກວຽກໃຫ້, ການຝຶກຝົນເຣື່ອງການຊອກວຽກ, ການບໍຣິການດ້ານການສຶກສາ, ການຝຶກຝົນວິຊາຊີບ, ແລະ ໂອກາດວຽກງານອື່ນໆໃຫ້ແກ່ບຸກຄົນຜູ້ທີ່ໄດ້ຮັບອາຫານຈຳເປັນ.

ອົງການຫລາຍໆບ່ອນຈະໃຫ້ຄວາມຊ່ວຍເຫລືອນຳການຂົນສົ່ງໄປມາ, ການຝາກລູກ, ຫລື ແຫລ່ງຊ່ວຍເຫລືອອື່ນໆ ທີ່ສາມາດຊ່ວຍເຫລືອທ່ານທຳງານໄປສູ່ເປົ້າຫມາຍວິຊາຊີບຂອງທ່ານ. ການບໍຣິການຈະຖືກເອົາໃຫ້ ໂດຍຜ່ານໂຮງຮຽນຄອມມິວນິຕີຄອນເຫລດ ຫລື ຄອນເຫລດການຊ່າງ ແລະ/ຫລື ອົງການຕັ້ງຢູ່ຕາມຊຸມນຸມຊົນ ແລະ ກວມເອົາພາກສ່ວນວຽກງານ ແລະ ຂະແນງຂອງວິຊາຊີບກ້ວາງຂວາງຫລາຍຢ່າງ. ເພື່ອຣາຍຣະອຽດເພີ້ມເຕີມຂອງການບໍຣິການຂອງໂຄງການ BFET, ເຂົ້າອອນລາຍນ໌ທີ່ **www.dshs.wa.gov/BFET**.

### ຖ້າຖືກອະນຸມັດ, ມັນຈະໃຊ້ເວລາດົນປານໃດທີ່ຈະໄດ້ຮັບການຊ່ວຍເຫລືອຂອງຂ້ອຍ?

- ໃນປະມານປານກາງ, ພວກເຮົາອະນຸມັດຄຳຮ້ອງສຳລັບຄອບຄົວທີ່ມີເງື່ອນໄຂໄດ້ຮັບໃນເວລາປະມານ 10 ວັນ.
- ເກືອບເຄິ່ງນຶ່ງຂອງຄຳຮ້ອງທັງຫມົດໄດ້ຖືກອະນຸມັດໃນເວລາຕ່ຳກວ່າຫົກວັນ.
- ເມື່ອເວລາພວກເຮົາອະນຸມັດຄຳຮ້ອງຂໍສຳລັບອາຫານຈຳເປັນ, ການຊ່ວຍເຫລືອຈະກັບຄືນໄປຫາວັນທີຂອງໃບຄຳຮ້ອງ.

USDA ເປັນຜູ້ໃຫ້ການບໍຣິການ ແລະ ນາຍຈ້າງ,ແລະຜູ້ໃຫ້ກູ້ເງິນທີ່ໃຫ້ໂອກາດເທົ່າທຽມກັນ.

ສະຖາບັນແຫ່ງນີ້ເປັນຜູ້ໃຫ້ການບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.

Washington State Department of Social & Health Services

Transforming lives

DSHS 22-1302 LA (Rev. 4/20) Laotian

ເພື່ອຣາຍລະອຽດເພີ້ມເຕີມ:

1-877-501-2233

www.washingtonconnection.org